ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເປີດຊຸດຝຶກອົບຮົມວຽກງານກວດກາພັກໃນຂະແໜງການທະນາຄານ






ວັນທີ 09 ພຶດສະພາ 2022 ໄດ້ເປີດຊຸດຝຶກອົບຮົມວຽກງານກວດກາພັກໃນຂະແໜງການທະນາຄານຂຶ້ນຢູ່ທີ່ຫ້ອງປະຊຸມສາຂາທະນາຄານແຫ່ງ ສປປ ລາວ ແຂວງຊຽງຂວາງ ພາຍໃຕ້ການເປັນປະທານຂອງ ທ່ານ ນາງ ວັດທະນາ ດາລາລອຍ ກຳມະການປະຈຳພັກ ທຫລ, ຮອງຜູ້ວ່າການ ທຫລ ແລະ ມີຫົວໜ້າສາຂາ ທຫລ ແຂວງຊຽງຂວາງ, ຕາງໜ້າຄະນະກວດກາສູນກາງພັກ, ຄະນະຮັບຜິດຊອບ, ນັກວິທະຍາກອນ ແລະ ສຳມະນາກອນເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ວັດທະນາ ດາລາລອຍ ໄດ້ໃຫ້ຮູ້ວ່າ: ວຽກງານກວດກາພັກ ແມ່ນວຽກງານໜຶ່ງທີ່ມີບົດບາດອັນສຳຄັນ ແລະ ຂາດບໍ່ໄດ້ໃນການຊີ້ນຳ-ນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ. ສະນັ້ນ, ພວກເຮົາຕ້ອງຮັບຮູ້ວ່າ ການກວດກາພັກ ແມ່ນມີບົດບາດສຳຄັນໃນການເຄື່ອນໄຫວວຽກງານຂອງກົງຈັກການຈັດຕັ້ງຂອງພັກ ແລະ ບັນດາອົງການຈັດຕັ້ງມະຫາຊົນທຸກຂັ້ນ ກໍ່ຄືການປະຕິບັດໜ້າທີ່ວຽກງານຂອງພະນັກງານນຳພາຄຸ້ມຄອງແຕ່ລະຂັ້ນ, ທາງດ້ານທິດສະດີ ແລະ ພຶດຕິກຳເພື່ອຕິດຕາມ, ໃກ້ຊິດຕິດແທດ, ເກັບກຳຂໍ້ມູນ, ຊອກຮູ້ສາເຫດ, ສັງເກດຕີລາຄາ ຕໍ່ການເຄື່ອນໄຫວຂອງການຈັດຕັ້ງພັກ ແລະ ສະມາຊິກພັກ-ພະນັກງານ. ຖ້າບໍ່ມີການກວດກາ ກໍ່ໝາຍຄວາມວ່າຢູ່ບ່ອນ ນັ້ນບໍ່ມີການນຳພາຂອງພັກ-ການຄຸ້ມຄອງຂອງລັດ; ການກວດກາ ແມ່ນຫຼັກການທີ່ສຳຄັນ, ແມ່ນຄູ່ມາດຕາເການໜຶ່ງ ທີ່ເປັນຄໍາຫອຍ ແລະ ບໍ່ສາມາດຕັດແຍກອອກຈາກກັນໄດ້ລະຫວ່າງການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ. ສະນັ້ນ, ໃນເງື່ອນໄຂສະພາບການໃໝ່ນີ້, ການກວດກາພັກ ຍິ່ງມີບົດບາດສຳຄັນທີ່ສຸດໃນທຸກການເຄື່ອນໄຫວວຽກງານຂອງພັກ ເພື່ອຊອກໃຫ້ເຫັນດ້ານດີເພື່ອເສີມຂະຫຍາຍ ແລະ ບັນດາຂໍ້ຄົງຄ້າງ ເພື່ອປັບປຸງແກ້ໄຂໃຫ້ທັນການ. ພ້ອມກັນນັ້ນ, ກໍເປັນການສະກັດກັ້ນ ແລະ ການແກ້ໄຂປະກົດການຫຍໍ້ທໍ້ ທີ່ພວມປະເຊີນໜ້າໃນການຊີ້ນຳ-ນຳພາວຽກງານຂອງພັກ ແລະ ການຄຸ້ມຄອງຂອງລັດ ໃຫ້ທັນສະພາບການ.

ຍ້ອນເຫັນໄດ້ຄວາມສຳຄັນດັ່ງກ່າວ, ຄະນະພັກ ທຫລ ກໍ່ໄດ້ເອົາໃຈໃສ່ຊີ້ນຳ-ນຳພາວຽກງານກວດກາພັກ ຢູ່ໃນຂັ້ນຄຸ້ມຄອງຂອງຕົນຢ່າງໃກ້ຊິດຕິດແທດຕະຫຼອດມາ ແລະ ຄະນະກວດກາແຕ່ລະຂັ້ນໃນຂະແໜງການທະນາຄານ ກໍ່ໄດ້ເປັນເຈົ້າການຢ່າງຕັ້ງໜ້າໃນການເຄື່ອນໄຫວວຽກງານກວດກາ ຢ່າງເປັນປົກກະຕິ ແລະ ມີຜົນສຳເລັດໃນຫຼາຍດ້ານ, ທັງເປັນກົນໄກອັນ

ສຳຄັນໃຫ້ແກ່ຄະນະພັກ-ຄະນະຜູ້ອຳນວຍການ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ກ່ຽວກັບວຽກງານກວດກາພັກ ໃນໄລຍະຜ່ານມາເປັນຢ່າງດີ. ນອກຈາກນັ້ນ, ດ້ານໂຄງປະກອບກົງຈັກການຈັດຕັ້ງພັກ ແລະ ນິຕິກຳທີ່ຮັບໃຊ້ວຽກງານດັ່ງກ່າວ ກໍ່ໄດ້ຮັບການປັບປຸງໃຫ້ທັນສະພາບການໃນແຕ່ລະໄລຍະ; ແຕ່ການເຄື່ອນໄຫວວຽກງານກວດກາພັກໃນໄລຍະຜ່ານມາ, ເຖິງວ່າມີຜົນສຳເລັດຫຼາຍດ້ານ ແຕ່ຄວາມຮັບຮູ້ດ້ານທິດສະດີ ແລະ ການຈັດຕັ້ງປະຕິບັດຕົວຈິງຂອງຜູ້ທີ່ຮັບຜິດຊອບວຽກງານກວດກາພັກ ເຫັນວ່າ ຍັງບໍ່ທັນເຈົ້າໃນໄດ້ຢ່າງລະອຽດ-ຈະແຈ້ງ ແລະ ຕອບສະໜອງໄດ້ກັບຄວາມຕ້ອງການຂອງວຽກງານໃນໄລຍະໃໝ່, ຊຶ່ງເປັນສາເຫດໜຶ່ງ ທີ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຕິດຕາມກວດກາພັກ ບາງຄັ້ງຄາວຍັງບໍ່ທັນມີປະສິດທິຜົນດີເທົ່າທີ່ຄວນ.

ການຈັດຝຶກອົບຮົມວຽກງານກວດກາພັກໃນຄັ້ງນີ້ ແມ່ນມີຄວາມສຳຄັນເປັນຢ່າງຍິ່ງ ທັງເປັນການຍົກລະດັບຄວາມຮູ້ທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງ ໃຫ້ແກ່ຜູ້ເຮັດວຽກງານກວດກາພັກໃຫ້ສູງຂຶ້ນ. ພ້ອມກັນນັ້ນ, ຊຸດຝຶກອົບຮົມນີ້ຈະໄດ້ພ້ອມກັນຄົ້ນຄວ້າ ຢ່າງເລິກເຊິ່ງຕື່ມອີກວ່າ ເປັນຫຍັງຈຶ່ງຕ້ອງມີການກວດກາພັກ? ກວດກາເພື່ອຫຍັງ? ກວດກາອັນໃດ? ເພື່ອຈະຮັບປະກັນໃຫ້ວຽກງານກວດກາພັກ ຕິດພັນກັບການຈັດຕັ້ງປະຕິບັດແນວ ທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ. ສະນັ້ນ, ການພັດທະນາຂະແໜງການທະນາຄານ ຕ້ອງສ້າງທຸກເງື່ອນໄຂໃຫ້ສະມາຊິກພັກ-ພະນັກງານ ແລະ ມະຫາຊົນໄດ້ມີສ່ວນຮ່ວມໃນເຄື່ອນໄຫວວິຊາສະເພາະ ຕິດພັນກັບວຽກງານພັກ ຢ່າງກວ້າງຂວາງ ແລະ ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ.




**#ຂ່າວໂດຍ: ນາງ ປາໃນ ພັນທະລາ**

**#ພາບໂດຍ: ກົມກວດກາພາຍໃນ**

## ຢູ່ເມືອງລາວໃຊ້ແຕ່ເງິນກີບ